ບົດອອກຂ່າວ

# ສປປລາວ ລົງນາມ ແລະ ເຂົ້າຮ່ວມເປັນພາຄີສົນທິສັນຍາສາກົນ

ໃນວັນທີ 29 ກັນຍາ 2008 ຢູ່ທີ່ສຳນັກງານໃຫຍ່ອົງການສະຫະປະຊາຊາດ ທີ່ນິວຢອກ ທ່ານ ດຣ ທອງລຸນ ສີສຸລິດ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງການຕ່າງປະເທດ ໄດ້ເຂົ້າຮ່ວມໃນພິທີລົງນາມສົນທິສັນຍາສາກົນຂອງອົງການສະຫະປະຊາຊາດ ( UN Treaty Event 2008 )ເຊິ່ງຈັດຂຶ້ນໃນໄລຍະການອະພິປາຍທົ່ວໄປໃນກອງປະຊຸມສະມັດຊາໃຫຍ່ ສປຊ ຄັ້ງທີ 63. ໃນພິທີດັ່ງກ່າວ ທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງການຕ່າງປະເທດ ໂດຍຕາງໜ້າລັດຖະບານແຫ່ງ ສປປລາວ ໄດ້ລົງນາມສົນທິສັນຍາສາກົນວ່າດ້ວຍການປົກປ້ອງທຸກຄົນຈາກການຫາຍສາບສູນແບບບັງຄັບ ແລະ ຍື່ນສານເຂົ້າຮ່ວມເປັນພາຄີສົນທິສັນຍາສາກົນວ່າດ້ວຍຄວາມເປັນເອກະພາບຂອງການກວດກາສິນຄ້າຕາມຊາຍແດນ ແລະ ສານເຂົ້າຮ່ວມເປັນພາຄີສົນທິສັນຍາສາກົນວ່າດ້ວຍ ການປາບປາມການໃຫ້ເງິນສະໜັບສະໜູນການກໍ່ການຮ້າຍ.

ການລົງນາມ ແລະ ເຂົ້າຮ່ວມໃນສົນທິສັນຍາເຫລົ່ານີ້ສະແດງເຖິງ ນະໂຍບາຍອັນສະເໝີຕົ້ນສະເໝີປາຍຂອງລັດຖະບານ ສປປລາວ ໃນການເຄື່ອນໄຫວຮ່ວມກັບວົງຄະນາຍາດສາກົນໃນບັນຫາ ເຊິ່ງຄຸ້ມຄອງໂດຍສົນທິສັນຍາເຫລົ່ານັ້ນ. ລັດຖະບານແຫ່ງ ສປປລາວ ປະນາມການຫາຍສາບສູນແບບບັງຄັບທຸກຮູບແບບ ແລະ ການສະແດງອອກຂອງລັດທິກໍ່ການຮ້າຍ ແລະ ຖືວ່າການກະທຳດັ່ງກ່າວຂັດກັບກົດໝາຍ, ສິນລະທຳ ແລະ ຄວາມໝຸ້ງມາດປາຖະໜາຂອງປະຊາຊົນລາວ ກໍຄື ບັນດາປະຊາຊາດທີ່ກ້າວໜ້າໃນໂລກ. ການເຂົ້າຮ່ວມເປັນພາຄີສົນທິສັນຍາວ່າດ້ວຍການປາບປາມການໃຫ້ເງິນສະໜັບສະໜູນ ການກໍ່ການຮ້າຍເປັນການກະທຳອັນສ້າງສັນຂອງ ສປປລາວ ໃນການປະຕິບັດຍັດຕິຕ້ານການກໍ່ການຮ້າຍຂອງສະພາຄວາມໝັ້ນຄົງ ( ຍັງຕິ 1373) ໃນຖານະເປັນປະເທດສະມາຊິກ ສປຊ. ການເຂົ້າຮ່ວມເປັນພາຄີສົນທິສັນຍາດັ່ງກ່າວເຮັດໃຫ້ຈຳນວນສົນທິສັນຍາໃນຂົງເຂດຕ້ານການກໍ່ການຮ້າຍທີ່ ສປປລາວ ເປັນພາຄີລວມເປັນ 9 ສະບັບໃນຈຳນວນສົນທິສັນຍາຕ້ານການກໍ່ການ ຮ້າຍທັງໝົດ 13 ສະບັບ.

ສົນທິສັນຍາສາກົນວ່າ ດ້ວຍຄວາມເປັນເອກະພາບຂອງການກວດກາ ສິນຄ້າຕາມຊາຍແດນ ແມ່ນມີຄວາມສຳຄັນ ສຳລັບ ສປປລາວ ໃນຖານະເປັນປະເທດເຊື່ອມຕໍ່ທາງບົກ ແລະ ຈະປະກອບສ່ວນເຂົ້າໃນຂະບວນການເຊື່ອມໂຍງ ທາງດ້ານເສດຖະກິດໃນພາກພື້ນໃຫ້ເປັນຮູບປະທຳ. ການລົງນາມໃນສົນທິສັນຍາວ່າດ້ວຍ ການປົກປ້ອງທຸກຄົນຈາກການຫາຍສາບສູນແບບບັງຄັບຂອງ ສປປລາວ ແມ່ນມີຄວາມສຳຄັນເພາະວ່າປີ 2008 ເປັນປີ ທີ່ອົງການສະຫະປະຊາຊາດ ແລະ ປະເທດສະມາຊິກ ສປຊ ຈັດຕັ້ງລະນຶກຄົບຮອບ 60 ຂອງຖະແຫລງການສາກົນ ວ່າດ້ວຍສິດທິມະນຸດ ( 10 ທັນວາ 1948-10 ທັນວາ 2008 ). ( ຈົບ )



Traités multilatéraux : pour une participation
émonie des traités de 2008 : vers une partici
et une mise en œuvre universelles
Dignité et justice pour t
23-25 et 29-30 septem
Siège de l'Organisation des
United Nations